ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບຸລີ
ພະແນກເຕັກໂນໂລຊີ ແລະ ການສື່ສານ

ເລກທີ..883../ພຕສ.ຊ
ໄຊຍະບຸລີ, ວັນທີ..20..ຕຸລາ 2026

ແຈ້ງການ

ຮຽນ: - ທ່ານ ປະທານຄະນະກຳມະການປົກຄອງເມືອງ 11 ເມືອງ ທີ່ເຄົາລົບ.
- ທ່ານ ຫົວໜ້າຫ້ອງການ ເຕັກໂນໂລຊີ ແລະ ການສື່ສານເມືອງ.
- ຜູ້ປະສານງານວຽກງານເຕັກໂນໂລຊີ ແລະ ການສື່ສານ ປະຈຳເມືອງ.

ເລື່ອງ: ການນຳໃຊ້ເຄື່ອງບິນບໍ່ມີຄົນຂັບ (Drone) ຂອງບຸກຄົນ, ນິຕິບຸກຄົນ ແລະ ພາກສ່ວນລັດ-ເອກະຊົນເພື່ອຖ່າຍຮູບພາບ, ວີດີໂອ ໃນງານບຸນປະເພນີ ແລະ ກິດຈະກຳຕ່າງໆ ຢູ່ພາຍໃນແຂວງ ໄຊຍະບຸລີ.

- ຂໍ້ຕົກລົງ ວ່າດ້ວຍການຢັ້ງຢືນຄົ້ນຄວາມຖີ່ວິທະຍຸສື່ສານ ສຳລັບເຄື່ອງບິນບໍ່ມີຄົນຂັບ ສະບັບເລກທີ 1831/ປທສ, ລົງວັນທີ 11 ກັນຍາ 2020.
- ອີງຕາມ ຂໍ້ຕົກລົງ ຂອງທ່ານເຈົ້າແຂວງໄຊຍະບຸລີ, ສະບັບເລກທີ 1107 /ຈຂ.ຊຍ, ລົງວັນທີ 26 ກັນຍາ 2022 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ພະແນກ ເຕັກໂນໂລຊີ ແລະ ການສື່ສານແຂວງໄຊຍະບຸລີ;
- ອີງຕາມ ກອງປະຊຸມປຶກສາຫາລືການປ້ອງກັນ ແລະ ສະກັດກັ້ນອາຊະຍະກຳເລກໝາຍໂທລະສັບ ແລະ ອິນເຕີເນັດ ຄັ້ງວັນທີ 07 ຕຸລາ 2026.

ເພື່ອເຮັດໃຫ້ການຄຸ້ມຄອງເຄື່ອງບິນບໍ່ມີຄົນຂັບ (ໂດຣນ) ຢູ່ພາຍໃນແຂວງ ໃຫ້ເຂົ້າສູ່ຄວາມເປັນລະບຽບຮຽບ ຮ້ອຍ, ຮັບປະກັນໄດ້ຄວາມສະຫງົບ, ປອດໄພ ແລະ ຄວາມໝັ້ນຄົງ; ມີການນຳໃຊ້ເຄື່ອງດັ່ງກ່າວໃຫ້ຖືກຕ້ອງຕາມ ລະບຽບການ, ຖືກກັບເປົ້າໝາຍໃນເຂດພື້ນທີ່ອານຸຍາດໃຫ້ຂຶ້ນບິນ ແລະ ບໍ່ໃຫ້ຂຶ້ນບິນ ແລະມີການຄຸ້ມຄອງອະນຸຍາດຄົ້ນ ຄວາມຖີຕາມລະບຽບການຢ່າງເຂັ້ມງວດ.

ພະແນກເຕັກໂນໂລຊີ ແລະການສື່ສານ ແຂວງ ໄຊຍະບຸລີ ຂໍຖືເປັນກຽດແຈ້ງມາຍັງບັນດາ ທ່ານ ປະທານ ຄະນະ ກຳມະການປົກຄອງເມືອງ, ຫົວໜ້າຫ້ອງການເຕັກໂນໂລຊີ ແລະການສື່ສານເມືອງ ແລະ ຜູ້ປະສານງານວຽກ ງານເຕັກໂນ ໂລຊີ ແລະ ການສື່ສານປະຈຳຢູ່ແຕ່ລະເມືອງ ຂອງແຂວງ ໄຊຍະບຸລີ ຊາບດັ່ງນີ້:

1. ເພີ້ມທະວີ, ຄຸ້ມຄອງ ແລະຕິດຕາມ ທຸກພາກສ່ວນທີ່ມີການນຳໃຊ້ໂດຣນຢູ່ພາຍໃນເມືອງຂອງຕົນ ທີ່ມີ ຈຸດ ປະ ສົງ ເພື່ອຂຶ້ນບິນໃນ ກິດຈະກຳຕ່າງໆ ໃຫ້ມີການປະກອບເອກະສານສະເໜີເຖິງພະແນກເຕັກໂນໂລຊີ ແລະ ການ ສື່ສານແຂວງ ເພື່ອຂຶ້ນທະບຽນ, ອອກໃບອະນຸຍາດ ການນຳໃຊ້ຄົ້ນຄວາມຖີ່ໃຫ້ຖືກຕ້ອງຕາມລະບຽບການ.
2. ພາຍຫລັງໄດ້ຮັບອານຸຍາດຍານຄົ້ນຄວາມຖີ່ຈາກພະແນກເຕັກໂນໂລຊີ ແລະການສື່ສານແຂວງ ແລ້ວ; ກໍລະນີ ຈະຂຶ້ນບິນໃນແຕ່ລະພື້ນທີ່, ໃນງານເທດສະການ, ງານບຸນປະເພນີ ທີ່ສຳຄັນຂອງແຂວງ, ຂອງເມືອງ ຈັດຂຶ້ນ ໃນ ແຕ່ລະໄລຍະ ທີ່ມີມວນຊົນໝາແໜ້ນ, ເຂດຊຸມຊົນ, ໃກ້ເຂດປົກຄອງຍຸດທະສາດຂອງເມືອງ ແລະໃກ້ເຂດ ປກຊ-ປກສ ຜູ້ນຳໃຊ້ໂດຣນ ຕ້ອງໄດ້ປະສານສົມທົບ ແລະ ແຈ້ງໃຫ້ພາກສ່ວນທີ່ກ່ຽວຂ້ອງຢູ່ພາຍໃນເມືອງຮັບຊາບ

CamScanner
ສແກນດ້ວຍ CamScanner

ເປັນຕົ້ນ ແມ່ນ ຫ້ອງ ການເຕັກໂນໂລຊີ ແລະການສື່ສານເມືອງ, ຫ້ອງການໂຍທາທິການ-ຂົນສົ່ງເມືອງ ແລະ ເຈົ້າໜ້າ ທີ່ ປກຊ-ປກສ ເພື່ອຕິດຕາມການນຳໃຊ້ໃຫ້ຖືກຕ້ອງຕາມ ວັດຖຸປະສົງໃນແຕ່ລະຄັ້ງຂອງການຂຶ້ນບິນ.

3. ມອບໃຫ້ຫ້ອງການ, ຜູ້ປະສານງານວຽກງານເຕັກໂນໂລຊີ ແລະການສື່ສານ ເມືອງເປັນໃຈກາງ ສົມທົບກັບ ຫ້ອງການໂຍທາທິການ-ຂົນສົ່ງເມືອງ ແລະເຈົ້າໜ້າທີ່ ປກຊ-ປກສ ເມືອງ ເອົາໃຈໃສ່ຄຸ້ມຄອງ, ຕິດຕາມຢ່າງເຂັ້ມງວດ ກໍລະນີ ຫາກມີຜູ້ລ່ວງລະເມີດການຂຶ້ນບິນ ໂດຍບໍ່ໄດ້ຮັບອານຸຍາດ ໃນແຕ່ລະພື້ນທີ່ຂອງເມືອງ ແມ່ນໃຫ້ປະຕິບັດ ຕາມຂໍ້ ຕົກລົງ ສະບັບເລກທີ 1831/ປທສ, ລົງວັນທີ 11 ກັນຍາ 2020 ວ່າດ້ວຍການຢັ້ງຢືນຄົ້ນຄວ້າຄວາມຖີ່ວິທະຍຸ ສື່ສານ ສຳລັບ ເຄື່ອງບິນບໍ່ມີຄົນຂັບ (ໂດຣນ) ແລະ ດຳເນີນຕາມກົດໝາຍ ຂອງແຕ່ລະຂະແໜງການທີ່ກ່ຽວຂ້ອງຢ່າງ ເຂັ້ມງວດ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງພັນດາທ່ານເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

ຫົວໜ້າພະນກ

ສອນສະຫວັນ ຈັນທະວົງ

ເບີໂທຕິດຕໍ:
020 94 066 667 ທ່ານອານຸພົງ ຈັນທະລັກ
(ຂະແໜງໄປສະນີ)

CamScanner
ສແກນດ້ວຍ CamScanner